# ພິທີມອບ-ຮັບໂຄງການຊ່ວຍເຫຼືອດ້ານການສຶກສາໃຫ້ ເມືອງກາສີ ແຂວງວຽງຈັນ

ໃນຕອນເຊົ້າຂອງວັນທີ 15 ຕຸລາ 2020 ຢູ່ທີ່ໂຮງຮຽນປະຖົມຫີນໂງ່ນ ເມືອງກາສີ ແຂວງວຽງຈັນ ໄດ້ມີການຈັດຕັ້ງພິທີມອບ-ຮັບໂຄງການຊ່ວຍເຫຼືອດ້ານການສຶກສາໃຫ້ ເມືອງກາສີ ແຂວງວຽງຈັນ. ໂດຍມອບໃຫ້ 4 ໂຮງຮຽນຄື: ໂຮງຮຽນປະຖົມ ບ້ານຫີນໂງ່ນ, ໂຮງຮຽນປະຖົມ ບ້ານນ້ຳແປັກ, ໂຮງຮຽນປະຖົມ ບ້ານແກ່ວກວ້າງ ແລະ ໂຮງຮຽນປະຖົມ ບ້ານນ້ຳແກ່ນ.








ໂດຍເປັນກຽດເຂົ້າຮ່ວມຂອງ ທ່ານ ສີທົນ ແສງພະຈັນ ເລຂາພັກເມືອງ ເຈົ້າເມືອງກາສີ, ທ່ານ ສັນຕິພາບ ວົງໄຊ ຮອງຫົວໜ້າ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ, ທ່ານ ສາຍຄຳ ດວງພະຈັນ ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາ ເມືອງກາສີ, ພະນັກງານຈາກ ທຄຕລ ສາຂາວັງວຽງ ແລະ ໜ່ວຍບໍລິການກາສີ, ຄະນະອຳນວຍການ 04 ໂຮງຮຽນ ພ້ອມດ້ວຍອຳນາດການປົກຄອງ 04 ບ້ານ ແລະ ນ້ອງນ້ອຍນັກຮຽນເຂົ້າຮ່ວມທັງໝົດ 100 ກວ່າຄົນ.



ໃນພິທີດັ່ງກ່າວ ທ່ານ ຫົງສະຫວັນ ວົງສຳພັນ ຫົວໜ້າຂະແໜງຫ້ອງການ-ບັນຊີ-ໄອທີ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ ໄດ້ຜ່ານບົດລາຍງານໂດຍຫຍໍ້ຂອງໂຄງການຊ່ວຍເຫຼືອດ້ານການສຶກສາໃຫ້ເມືອງກາສີ ແຂວງວຽງຈັນວ່າ: ໂດຍປະຕິບັດຕາມແຈ້ງການຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກ່ຽວກັບວຽກງານຊ່ວຍເຫຼືອສັງຄົມໂດຍສະເພາະແມ່ນເນັ້ນໜັກດ້ານການສຶກສາ ແລະ ດ້ານສຸຂະພາບ ຂອງປະຊາຊົນເຂດຫ່າງໄກຊອກຫຼີກໃນທົ່ວປະເທດ ເຊິ່ງມີງົບປະມານທັງໝົດປະມານ 1 ຕື້ກວ່າກີບ. ສະເພາະ ເມືອງກາສີ ແຂວງວຽງຈັນ ແມ່ນໄດ້ຮັບການແບ່ງປັນແຫຼ່ງທຶນຊ່ວຍເຫຼືອດ້ານການສຶກສາ ມູນຄ່າ 7.000.000 ກີບ. ໂຄງການຊ່ວຍເຫຼືອດ້ານການສຶກສາໃຫ້ ເມືອງກາສີ ແຂວງວຽງຈັນ ໃນຄັ້ງນີ້ປະກອບມີ: ອຸປະກອນເຄື່ອງຫຼິ້ນ, ປຶ້ມນິທານສຳລັບນ້ອງນ້ອຍອະນຸບານ, ອຸປະກອນການຮຽນສຳລັບນ້ອງນ້ອຍ ປໍ 1 ຫາ ປໍ 5, ໝາກບານເຕະໃຫ້ ໂຮງຮຽນປະຖົມ ບ້ານຫີນໂງ່ນ, ໂຮງຮຽນປະຖົມ ບ້ານນ້ຳແປັກ, ໂຮງຮຽນປະຖົມ ບ້ານແກ່ວກວ້າງ ແລະ ໂຮງຮຽນປະຖົມ ບ້ານນ້ຳແກ່ນ.

ໃນພິທີ ດັ່ງກ່າວໄດ້ມີການຜັດປ່ຽນກັນ ຕາງໜ້າໃຫ້ແຕ່ລະພາກສ່ວນ ປະກອບຄຳເຫັນຕໍ່ພິທີມອບ-ຮັບໃນຄັ້ງນີ້ຢ່າງກົງໄປ-ກົງມາ. ຫຼັງຈາກນັ້ນກໍ່ໄດ້ລົງນາມເຊັນບົດບັນທຶກຮ່ວມກັນ ພ້ອມທັງມອບ-ຮັບ ໂຄງການຊ່ວຍເຫຼືອດ້ານການສຶກສາໃຫ້ ເມືອງກາສີ ແຂວງວຽງຈັນ ຢ່າງເປັນທາງການ. ໃຫ້ກຽດຕາງໜ້າໃຫ້ແກ່ ທຄຕລ ສາຂາວັງວຽງ ມອບໃນຄັ້ງນີ້ໂດຍ ທ່ານ ສັນຕິພາບ ວົງໄຊ ຮອງຫົວໜ້າ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ ແລະ ຕາງໜ້າຮັບໃນຄັ້ງນີ້ ໂດຍ ທ່ານ ສາຍຄຳ ດວງພະຈັນ ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາ ເມືອງກາສີ ໂດຍ ສ່ອງໜ້າອຳນາດການປົກຄອງເມືອງກາສີ ແລະ ຕາງໜ້າຈາກແຕ່ລະພາກສ່ວນ.












ໃນພິທີດັ່ງກ່າວ ຫ້ອງການສຶກສາທິການ ແລະ ກິລາ ເມືອງກາສີ ໄດ້ມອບໃບຈາລຶກບຸນຄຸນໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ, ຕາງໜ້າມອບໂດຍ ທ່ານ ສາຍຄຳ ດວງພະຈັນ ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາ ເມືອງກາສີ ແລະ ຕາງໜ້າຮັບໂດຍ ທ່ານ ສັນຕິພາບ ວົງໄຊ ຮອງຫົວໜ້າ ທຄຕລ ສາຂາວັງວຽງ.




ໃນຕອນທ້າຍພິທີ ຍັງໄດ້ຮັບຟັງການໂອ້ລົມຂອງ ທ່ານ ສີທົນ ແສງພະຈັນ ເລຂາພັກເມືອງ ເຈົ້າເມືອງໆກາສີ. ທ່ານໄດ້ກ່າວ ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງມາຍັງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ ທີ່ໄດ້ໃຫ້ທຶນຊ່ວຍເຫຼືອດ້ານການສຶກສາໃຫ້ ເມືອງກາສີ ແຂວງວຽງຈັນໃນຄັ້ງນີ້. ການຊ່ວຍເຫຼືອໃນຄັ້ງນີ້ແມ່ນສຸດທີ່ມີຄວາມໝາຍຄວາມສຳຄັນຫຼາຍຍິ່ງ ເປັນການປະກອບສ່ວນໃນການພັດທະນາຊັບພະຍາກອນມະນຸດ ແລະ ນອນໃນແຜນຍຸດທະສາດຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ່ VII ເມືອງກາສີ ແຂວງວຽງຈັນ. ພ້ອມນີ້ທ່ານຍັງໄດ້ຮຽກຮ້ອງມາຍັງຄູ-ອາຈານຈົ່ງເປັນເຈົ້າການແຂ່ງຂັນການສອນດີ-ຮຽນເກັ່ງ, ນ້ອງນ້ອຍນັກຮຽນກໍ່ຂໍໃຫ້ຕັ້ງໃຈຮ່ຳຮຽນ ເປັນເດັກທີ່ດີຂອງພໍ່ແມ່ ເປັນນັກຮຽນເກັ່ງຂອງຄູ-ອາຈານ. ສຸດທ້າຍທ່ານຍັງກ່າວຕື່ມອີກວ່າໃນໂອກາດໜ້າກໍຂໍໃຫ້ທາງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາວັງວຽງ ສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອສັງຄົມໃນທົ່ວປະເທດເວົ້າລວມ ເວົ້າສະເພາະກໍ່ຄື ເມືອງກາສີ ແຂວງວຽງຈັນ ຂອງພວກເຮົາ ເພື່ອພັດທະນາຂົງເຂດການສຶກສາ ຢູ່ເມືອງກາສີ ແຂວງວຽງຈັນຂອງພວກເຮົາໂດຍສະເພາະແມ່ນເຂດຫ່າງໄກຊອກໃຫ້ຈະເລີນກ້າວໜ້າຕໍ່ໄປ.